# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 27 ເມສາ 2008 (04-27-2008)

---

## <u>ສຳຣວດເບິ່ງການຖ່ອມໃຈ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ປະຖົມມະການ 32:3,6-12; 33:1-5, 9-11
**<u>ຄຳຖາມຊີວິດ:</u>** ເຮັດແນວໃດຂ້າພະເຈົ້າຈຶ່ງຖ່ອມໃຈໄດ້?
**<u>ພຣະຄັມພີແຫ່ງຄວາມຈິງ:</u>** ຄົນຂອງພຣະເຈົ້າຜູ້ມີຄວາມເຊື່ອໄດ້ຖ່ອມໃຈຕໍ່ພຣະເຈົ້າແລະຄົນອື່ນ.
**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ວຍໃຫ້ທ່ານຄົ້ນຫາຫົນທາງໃໝ່ໃນຄວາມເຊື່ອຂອງທ່ານ ໂດຍ:

- ໃຫ້ກວດກາເບິ່ງການຖ່ອມໃຈທີ່ ຢາໂຄບມີໃນຊີວິດ, ແລະ
- ຄຳນວນເບິ່ງວ່າທ່ານມີການຖ່ອມໃຈ ຫລືມີຄວາມອວດຕົວ.

ການຖອມຈິດໃຈແມ່ນສັງຄົມບໍ່ຢາກໄດ້ຍິນໃນທຸກມື້ນີ້. ນັກຫລິ້ນກິລາເຕະບານໄດ້ຕີເອິກຕົນເອງໃນເມື່ອໄດ້ເຕະບານເຂົ້າໂກນ ແຕ່ເຂົາລືມໄປແລ້ວວ່າກ່ອນຈະໄດ້ມີໂອກາດເຮັດດັ່ງນັ້ນ ມີຄົນອື່ນຫລາຍໆຄົນມີພາກສ່ວນນຳ. ສະມາຊິກຂອງຄຣິສຕະຈັກໃຈຮ້າຍໃນເມື່ອຄົນອື່ນບໍ່ເຮັດຕາມຄວາມຄິດຂອງຕົນເອງ. ຢ່າງໃດກໍຕາມ ຈະເປັນນັກກິລາໃນສນາມ ຫລືຄຣິສະຕຽນທີ່ໂບດ ຫລາຍໆເທື່ອພວກເຮົາບໍ່ຄິດເຖິງການຖ່ອມຕົວທີ່ພວກເຮົາທຸກໆຄົນຕ້ອງການທີ່ສຸດໃນຊີວິດ.

ການຖ່ອມໃຈບໍ່ເປັນສິ່ງທີ່ຢາໂຄບເຫັນມີຄຸນຄ່າໃນຊີວິດ. ຕລອດຊີວິດຂອງລາວນັ້ນລາວພະຍາຍາມເຮັດໃຫ້ຕົນເອງມີຄວາມສຸກ ບໍ່ຄິດເຖິງເລີຍວ່າສິ່ງທີ່ລາວເຮັດນັ້ນເປັນເຫດໃຫ້ຄົນອື່ນໄດ້ຮັບຄວາມທຸກທໍຣະມານ. ລາວໄດ້ຫລອກເອົາສິດທິຂອງຜູ້ເປັນອ້າຍ ເອຊາວ ຜູ້ຄວນໄດ້ຮັບພຣະພອນ, ລາວຍັງຫລອກຜູ້ເປັນພໍ່ອີກ. ຕໍ່ມາໃນຂັ້ນສຸດທ້າຍຂອງຊີວິດ ລາວໄດ້ຮູ້ສຶກວ່າຕົວເອງເປັນຄົນເຫັນແກ່ຕົວ ແລະພະຍາຍາມຄືນດີກັບຜູ້ເປັນອ້າຍຄື ເອຊາວ. ໃນເມື່ອເວລາການປອງດອງມາເຖິງແລ້ວ ຢາໂຄບໄດ້ສະແດງເຖິງສິ່ງໃໝ່ທີ່ລາວໄດ້ພົບເຫັນ ຄືຖ່ອມໃຈຍອມຕໍ່ຜູ້ເປັນອ້າຍ.

## <u>ສຶກສາພຣະຄັມພີ</u>

### 1. <u>ສຳຣວດເບິ່ງສະພາບການ</u> (ປະຖົມມະການ 32:3,6-8)

ຢາໂຄບໄດ້ພົບກັບອົງພຣະຜູ້ເປັນເຈົ້າຊຶ່ງເປັນເຫດເຮັດໃຫ້ລາວຖ່ອມຈິດໃຈກ່ອນລາວຈະໄດ້ພົບກັບຜູ້ເປັນອ້າຍຄື ເອຊາວ (ປຖກ. 28:10-22). ຫລາຍປີຕໍ່ມາ ຢາໂຄບກໍເຂົ້າໄປພົບຜູ້ເປັນອ້າຍ, ເອຊາວ. ລາວມີແຜນການທີ່ດີ, ນື່ງ, ລາວໄດ້ສົ່ງ**ຕົວແທນຜູ້ບອກຂ່າວ**ອອກໄປກ່ອນ, ລາວໄດ້ສົ່ງຕົວແທນຜູ້ບອກຂ່າວອອກໄປດ້ວຍການຖ່ອມໃຈເພື່ອພວກເຂົາຈະໄດ້ສຳຣວດເບິ່ງສະພາບການເວລາພົບກັບຜູ້ເປັນອ້າຍ.

ຜູ້ເປັນອ້າຍມາພົບກັບນ້ອງພ້ອມກັບຊາຍສະກັນ 400 ຄົນ. ເມື່ອນ້ອງຊາຍເຫັນອ້າຍມີຄົນມານຳຫລາຍຄົນຂອງລາວຄິດບໍ່ດີຄິດວ່າອ້າຍມາແກ້ແຄ້ນ ເພາະຢາໂຄບຮູ້ແກ່ໃຈວ່າລາວໄດ້ເຮັດຜິດຕໍ່ອ້າຍຫລາຍ; ດັ່ງນັ້ນຢາໂຄບຈຶ່ງເກີດມີຄວາມຢ້ານແລະເປັນທຸກໃຈ. ລາວຈຶ່ງແຍກຄອບຄົວອອກເປັນສອງກຸ່ມ, ເພື່ອບໍ່ໃຫ້ຜູ້ເປັນອ້າຍທຳລາຍຄອບຄົວຂອງຕົນເອງ ງ່າຍເກີນໄປ.

ຂັ້ນທຳອິດທີ່ລາວຕ້ອງເຮັດຄືໄດ້ກວດເບິ່ງຈິດໃຈຕົວເອງດ້ວຍຄວາມສັດຊື່ວ່າຕົນເອງມີການຖ່ອມຕົວເພື່ອຈະສ້າງຄວາມສັມພັນກັບຄົນອື່ນບໍ່. ເໝືອນກັນກັບຢາໂຄບ ພວກເຮົາຕ້ອງກວດເບິ່ງຕົວເອງວ່າການກະທຳຂອງເຮົາເຮັດໃຫ້ຜູ້ອື່ນບໍ່ສະບາຍໃຈຫລືເຈັບປວດບໍ່. ຫລາຍໆເທື່ອຄວາມເຫັນແກ່ຕົວຂອງພວກເຮົາເຮັດໃຫ້ຜູ້ອື່ນໄດ້ຮັບຄວາມເຈັບປວດໂດຍທີ່ພວກເຮົາບໍ່ຮູ້ສຶກຕົວເລີຍ.

ໂດຍວິທີໃດທີ່ຄຣິສະຕຽນເຮົາກວດເບິ່ງຕົວເອງຢ່າງສັດຊື່ເຖິງຄວາມສຳພັນຂອງຕົນກັບຄົນອື່ນ? ວິທີນຶ່ງຄື: ຍອມຟັງຄົນອື່ນ, ຖາມຄວາມຄິດເຫັນຂອງຄົນອື່ນ, ໂດຍການສະມາທິຕຶກຕອງ, ແລະຂຽນຈົດໝາຍເຖິງຜູ້ອື່ນເພື່ອເຂົາເຈົ້າຈະເປັນແສງສະທ້ອນຕໍ່ເຮົາວ່າເຮົາເປັນຄົນຊະນິດໃດກັນແທ້. ກວດເບິ່ງຄວາມສຳພັນຂອງຕົນເອງຕໍ່ຄົນອື່ນເພື່ອຈະໄດ້ເຫັນພາບຕົວຈິງວ່າຕົນເອງເປັນຄົນຊະນິດໃດ.

## ໒. <u>ຖ່ອມໃຈລົງຕໍ່ພຣະເຈົ້າ</u> (ປະຖົມມະການ 32:9-12)

ຢາໂຄບໄດ້ຫັນຈາກການສຳຣວດເບິ່ງຕົນເອງແລ້ວກໍໄດ້ອ້ອນວອນ. ລາວຖ່ອມໃຈລົງຕໍ່ພຣະເຈົ້າດ້ວຍຢ່າງທັນທີ. ລາວເລີ້ມຕົ້ນອະທິຖານດ້ວຍການທູນຂໍໃຫ້ພຣະເຈົ້າຄິດເຖິງພຣະສັນຍາທີ່ພຣະອົງມີຕໍ່ລາວ ແລະຕໍ່ບັນພະບຸຣຸດຂອງລາວ. ລາວຈຳໄດ້ວ່າພຣະເຈົ້າໄດ້ສັ່ງໃຫ້ລາວກັບຄືນໄປຍັງ**ແຜນດິນ** ແລະ**ຄອບຄົວ**. ລາວຮູ້ວ່າລາວບໍ່ເປັນຄົນສົມຄວນໄດ້ຮັບຄວາມ**ເມດຕາ** ແລະ **ຄວາມສັດ**ຊື່ທີ່ພຣະເຈົ້າມີຕໍ່ລາວ, ແຕ່ລາວຈື່ໄດ້ທີ່ພຣະເຈົ້າໄດ້ຊົງອວຍພຣະພອນແກ່ລາວທັງໆທີ່ລາວເປັນຄົນສາມັນທັມມະດາ.

ພວກເຮົາກໍເຊັ່ນກັນ ຮູ້ຈັກວ່າພວກເຮົາບໍ່ເປັນຄົນສົມຄວນທີ່ຈະຮ້ອງຂໍໃຫ້ພຣະເຈົ້າອວຍພຣະພອນ, ນຳພາ, ຫລືຮັກສາ. ການຮູ້ສຶກວ່າຕົນເອງບໍ່ມີຄຸນຄ່ານັ້ນເປັນສັນຍາໜັກເຖິງການຖ່ອມຈິດໃຈ. ເຖິງແມ່ນວ່າພວກເຮົາຮູ້ສຶກວ່າຕົນເອງບໍ່ມີຄຸນຄ່າຫຍັງ ແຕ່ພວກເຮົາຮູ້ວ່າພຣະເຈົ້າເປັນຜູ້ມີຄ່າ ແລະພວກເຮົາກ້າທີ່ຈະເຂົ້າໄປຫາພຣະບັນລັງຂອງພຣະອົງດ້ວຍພຣະນາມຂອງພຣະອົງ.

ຢາໂຄບໄດ້ອ້ອນວອນໃຫ້ພຣະເຈົ້າ**ຊ່ວຍເຫລືອ**ໃຫ້ພົ້ນຈາກເອື້ອມມືຂອງຜູ້ເປັນອ້າຍ, **ເອຊາວ**. ລາວຮູ້ວ່າຖ້າພຣະເຈົ້າບໍ່ໄດ້ເຂົ້າມາຊ່ວຍແລ້ວ ເຫດການທີ່ເກີດຂຶ້ນນັ້ນຈະເປັນຜົນໂຫດຮ້າຍທີ່ສຸດ. ມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດຊ່ວຍຢາໂຄບໄດ້. ການທີ່ລາວມີຄວາມສາມາດຕົວະຫລືຫລອກຄົນອື່ນໄດ້ນັ້ນ ເວລານີ້ກໍບໍ່ມີຄວາມໝາຍອັນໃດແລ້ວ. ລາວຮູ້ວ່າຈະໄດ້ຮັບການນຳພາແລະຊ່ວຍເຫລືອຄືອະທິຖານອ້ອນວອນຍອມຕໍ່ພຣະເຈົ້າ ດັ່ງນັ້ນ, ລາວຈຶ່ງຮ້ອງໄຫ້ຕໍ່ພຣະເຈົ້າໃຫ້ຊ່ວຍລາວດ້ວຍຄວາມປານີ.

ອີກເທື່ອນຶ່ງ ຢາໂຄບໄດ້ຮ້ອງຂໍຕໍ່ພຣະເຈົ້າໃຫ້ຈື່ຈຳພຣະສັນຍາຂອງພຣະອົງ. ລາວເລີ້ມແລະເປີດຄຳອ້ອນວອນຂອງລາວດ້ວຍຄວາມໄວ້ວາງໃຈໃນພຣະເຈົ້າວ່າ ພຣະອົງຈະກະທຳສິ່ງຖືກຕ້ອງ. ລາວຮູ້ແກ່ໃຈວ່າເວລານີ້ລາວບໍ່ສາມາດປ່ຽນໃຈຜູ້ເປັນອ້າຍຄື ເອຊາວ, ສະມາຊິກໃນຄອບຄົວທີ່ລາວມີຢູ່ນັ້ນກໍບໍ່ສາມາດຕໍ່ສູ້ກັບຈຳນວນ 400 ຄົນທີ່ມານຳອ້າຍ. ການຖ່ອມຈິດໃຈເປັນການກະທຳທີ່ຖືກຕ້ອງແລະຮູ້ຈັກຣິດອຳນາດຂອງພຣະເຈົ້າ. ຢາໂຄບໄດ້ຈົດຈໍ່ຕໍ່ຄວາມສັດຊື່ຂອງພຣະເຈົ້າເວລາລາວອ້ອນວອນອະທິຖານໃຫ້ພຣະອົງຊ່ວຍ. ພວກເຮົາຄວນຖ່ອມໃຈຕໍ່ພຣະເຈົ້າໂດຍສະເພາະເວລາຢູ່ໃນສະພາບສຸກເສີນ ແລະຍອມໃຫ້ພຣະອົງປົດປ່ອຍ.

## ໓. <u>ຖ່ອມໃຈລົງຕໍ່ຄົນອື່ນ</u> (ປະຖົມມະການ 33:1-3)

ຢາໂຄບ ບໍ່ໄດ້ພຽງແຕ່ຖ່ອມໃຈຕໍ່ພຣະເຈົ້າເທົ່ານັ້ນ ແຕ່ລາວຍັງຖ່ອມໃຈຕໍ່ຜູ້ເປັນອ້າຍອີກ. ຫລັງຈາກພັດພາກກັນເປັນ ເວລາ ໒໐ ປີ ເວລານີ້ຢາໂຄບກັບບ້ານ ແຕ່ເມື່ອໄດ້ເຫັນຂີ້ຝຸ່ນດິນຢ່າງຫລວງຫລາຍເພາະ 400 ຄົນຂອງຜູ້ເປັນອ້າຍໄດ້ມາຮັບຕ້ອນ. ເວລານີ້ຄົນເຫລົ່ານັ້ນເຂົ້າມາໃກ້ແລ້ວ ໃນຄວາມຄິດໃນໃຈຂອງລາວແລ້ວຈະມີສອງຢ່າງເກີດຂຶ້ນ: ເຫດການນັ້ນອາດເປັນຄວາມຍິນດີທີ່ໄດ້ກັບມາບ້ານພົບກັບອ້າຍ ຫລືລາວອາດໄດ້ຮັບພັຍອັນຕະລາຍ. ຢາໂຄບໄດ້ເຮັດສອງຢ່າງເພື່ອຈະຮັກສາຄອບຄົວຂອງລາວ. ນຶ່ງ, ລາວແບ່ງຄອບຄົວລາວອອກເປັນສາມກຸ່ມ, ປະກອບດ້ວຍຂ້າໃຊ້ຍິງ, ເລອາກັບລູກຊາຍທັງຫລາຍ, ແລະຣາເຊັນພ້ອມລູກຊາຍ ໂຢເຊັບ. ຢາໂຄບໄດ້ປະຕິບັດຕໍ່ຣາເຊັນ ແລະໂຢ

ເຊັບເປັນພິເສດເພາະລາວມີຄວາມຮັກຕໍ່ນາງ (ປຖກ 29:30), ແລະຕໍ່ມາຈິ່ງເປັນສາຍເຫດໃຫ້ຄອບຄົວມີບັນຫາຂຶ້ນ. ແຕ່ຢ່າງໃດກໍຕາມ ໃນເວລານີ້ຢາໂຄບໄດ້ປົກປ້ອງຮັກສາຄອບຄົວຂອງລາວ.

ຢາໂຄບໄດ້ກົ້ມກາບຕໍ່ໜ້າເອຊາວເຈັດເທື່ອໃນເມື່ອມາພົບກັນ. ຢ່າລືມ, ກ່ອນໜ້ານີ້ຢາໂຄບບໍ່ໄດ້ຍອມຕໍ່ຄົນນຶ່ງຄົນໃດມາກ່ອນ. ເວລານີ້ພຣະເຈົ້າໄດ້ກະທໍາໃຫ້ລາວຖ່ອມຕົວ ແລະລາວກໍເປັນຜູ້ເລີ້ມຕົ້ນເພື່ອຈະໄດ້ຄືນດີກັນ. ລາວຖ່ອມໃຈດ້ວຍການກົ້ມຂາບຕໍ່ຜູ້ເປັນອ້າຍ ແລະບໍ່ຄອຍຖ້າໃຫ້ອ້າຍຕອບສນອງແຕ່ປະການໃດ.

ຫລາຍເທື່ອພວກເຮົາຢາກຄືນດີກັບຄົນອື່ນ ແລະພວກເຮົາຢາກໃຫ້ຄົນອື່ນມາເຮັດດີນໍາກ່ອນ. ຢາໂຄບໄດ້ເຕືອນພວກເຮົາວ່າ ຄຣິສະຕຽນຄວນເປັນຄົນເລີ້ມຕົ້ນໃນການຄືນດີກັບຄົນອື່ນສເມີ. ການເຮັດຢ່າງນີ້ຍ່ອມເປັນການສ່ຽງ ລາວບໍ່ສາມາດຕອບໂຕຕໍ່ຜູ້ເປັນອ້າຍເອຊາວໄດ້ເລີຍ, ລາວມີແຕ່ຕອບສນອງຕໍ່ຄໍາສັ່ງຂອງພຣະເຈົ້າໃຫ້ເຮັດ.

ຫລັງຈາກຢາໂຄບໄດ້ກົ້ມຂາບລົງຕໍ່ເອຊາວ ແລະຮ້ອງຜູ້ເປັນອ້າຍວ່າເຈົ້ານາຍ (33:8,13-15), ຍັງກ່າວອີກວ່າລາວເປັນຜູ້ຮັບໃຊ້ (33:5,14), ແລະລາວກໍຍັງເອົາຂອງຂວັນໃຫ້ໃນການຄືນດີກັນ (33:11). ສິ່ງທີ່ລາວເຮັດນີ້ເປັນການຖ່ອມໃຈເພາະລາວຕ້ອງການຄືນດີກັບຜູ້ເປັນອ້າຍ ແລະໃຫ້ອ້າຍອະພັຍໂທດໃຫ້ (ປຖກ 32:20). ຢາໂຄບເມື່ອຍໃນການຕໍ່ສູ້ກັບບັນຫາ ແລະໄດ້ໜີໄປເລື້ອຍໆ, ລາວຕ້ອງການກັບມາບ້ານເກົ່າດ້ວຍສັນຕິວິທີ.

## 4. <u>ຍອມຮັບວ່າພຣະເຈົ້າມີສ່ວນ</u> (ປະຖົມມະການ 33:4-5, 9-11)

**ພຣະພັກຂອງພຣະເຈົ້າ**

ພຣະຄັມພີໄດ້ເວົ້າເຖິງສະພາບຮ່າງກາຍຂອງມະນຸດເພື່ອຊ່ອຍໃຫ້ເຮົາສາມາດເຂົ້າໃຈເຖິງເຣື່ອງພຣະເຈົ້າດີຂຶ້ນ. "ພຣະພັກຂອງພຣະເຈົ້າ" ໝາຍເຖິງການສະຖິດຢູ່ຂອງພຣະອົງ. ເວລາຢາໂຄບໄດ້ຕໍ່ສູ້ກັບຊາຍຄົນນຶ່ງທີ່ ຈາບບອກ ແລະຮູ້ວ່າລາວເອງໄດ້ປະເຊີນກັບພຣະເຈົ້າ, ດັ່ງນັ້ນລາວຈິ່ງໃສ່ຊື່ທີ່ນັ້ນວ່າ ເປນີເອນ, ຊຶ່ງມີຄວາມໝາຍວ່າ "ພຣະພັກຂອງພຣະເຈົ້າ" (ປຖກ 32:24-32). ຢາໂຄບໄດ້ປະເຊີນກັບພຣະເຈົ້າກ່ອນລາວຈະໄດ້ພົບກັບຜູ້ເປັນອ້າຍ-ເອຊາວ. ດັ່ງນັ້ນ, ການທີ່ລາວໄດ້ພົບກັບອ້າຍນັ້ນເປັນໄປດ້ວຍດີເພາະລາວໄດ້ພົບກັບພຣະເຈົ້າ ແລະຖ່ອມຈິດໃຈຄືນກ່ອນນັ້ນທີ່ເປນີເອນ.

**ເອຊາວ** ໄດ້ຕອບສນອງຕໍ່ຢາໂຄບເພາະລາວເຫັນການຖ່ອມຕົວຂອງຜູ້ເປັນນ້ອງ ອ້າຍຈິ່ງແລ່ນໄປຫານ້ອງ ເຂົ້າໄປກອດນ້ອງແລະຮ້ອງໄຫ້ໃສ່ກັນ. ຊາວປີທີ່ມີຄວາມຂົມຂື່ນເວລາເຫັນນ້ອງກໍດີໃຈ. ການທີ່ໃຫ້ອະພັຍນັ້ນກໍດີກວ່າຄວາມຂົມຂື່ນທີ່ເກັບໄວໃນໃຈ.

ໃນເມື່ອເອຊາວໄດ້ຫລຽວໄປກໍໄດ້ເຫັນ**ພວກຜູ້ຍິງແລະເດັກນ້ອຍ** ລາວຈິ່ງຖາມຜູ້ເປັນນ້ອງວ່າ ພວກເຂົາແມ່ນໃຜ? ຢາໂຄບຕອບວ່າພຣະເຈົ້າໄດ້ອວຍ**ພຣະພອນ**ແກ່ລາວໃນຊີວິດໃຫ້ມີລູກຫລາຍຄົນ. ລາວຍັງກ່າວວ່າ ລາວບໍ່ສົມຄວນຈະໄດ້ຮັບພຣະພອນຫລາຍປານນີ້, ແຕ່ພຣະເຈົ້າໄດ້ເລືອກອວຍພຣະພອນແກ່ລາວ.

ທຸກໆກຸ່ມທີ່ເຂົ້າມາຫາເອຊາວ ພວກເຂົາໄດ້ມອບ**ຂອງຂວັນ**ໃຫ້ແກ່ເອຊາວ. ຜູ້ເປັນອ້າຍພະຍາຍາມທີ່ປະຕິເສດບໍ່ຍອມຮັບເອົາຂອງຂວັນນັ້ນ ແຕ່ຢາໂຄບຂໍໃຫ້ຮັບເອົາເພາະເປັນພຣະພອນຂອງພຣະເຈົ້າທີ່ລາວໄດ້ຮັບຈາກພຣະເຈົ້າ. ຢາໂຄບຜູ້ເກົ່າ ແນ່ນອນບໍ່ຢາກແບ່ງປັນພຣະພອນແກ່ຄົນອື່ນ, ແຕ່ດຽວນີ້ໄດ້ພົບກັບການປ່ຽນແປນຈາກພຣະເຈົ້າແລ້ວ. ຢາໂຄບຈຶ່ງວ່າ ເມື່ອເຫັນໜ້າຂອງອ້າຍກໍເໝືອນກັບເຫັນ**ພຣະພັກຂອງພຣະເຈົ້າ**. ເໝືອນກັບອົງພຣະຜູ້ເປັນເຈົ້າເອຊາວໄດ້ເຫັນໃຈຕໍ່ຢາໂຄບຜູ້ຮູ້ສຶກວ່າຕົນເອງບໍ່ສົມຄວນຈະໄດ້ຮັບພຣະພອນເລີຍ.

ຜູ້ທີ່ເດີນໄປກັບພຣະເຈົ້າດ້ວຍຄວາມຖ່ອມຕົວ ໄດ້ຮູ້ຕົວວ່າຕົນເອງບໍ່ສາມາດເຮັດອັນໃດໄດ້ຖ້າບໍ່ມີພຣະເຈົ້າໃນຊີວິດ. ພວກເຮົາຜູ້ມີຄວາມສັມພັນອັນດີກັບພຣະເຈົ້າຄວນຮັບຮູ້ວ່າພຣະເຈົ້າມີພາກສ່ວນໃນຊີວິດຂອງເຮົາ ແລະພວກເຮົາຄວນຖວາຍຕົວເອົາໃຈໃສ່ໃນການແບ່ງປັນພຣະພອນທີ່ໄດ້ຮັບນັ້ນກັບຄົນອື່ນ.

ພຣະເຈົ້າໄດ້ນຳພາຄອບຄົວຂອງຢາໂຄບເຂົ້າມາພົບກັບເອຊາວ ແລະພຣະອົງໄດ້ຊ່ອຍໃຫ້ພວກເຂົາອະພັຍໃຫ້ກັນແລະກັນ. ສິ່ງທີ່ຢາໂຄບຄິດວ່າມັນເປັນໄປບໍ່ໄດ້ນັ້ນພຣະເຈົ້າໄດ້ປ່ຽນແປງໃຫ້ຕົກລົງກັນໄດ້ຢ່າງໜ້າປລາດໃຈ. ເຫດຜົນທີ່ເຫັນວ່າຕົກລົງກັນດ້ວຍດີກໍເພາະວ່າມີການຖ່ອມຈິດໃຈລົງຢ່າງພຣະເຈົ້າຊອບພຣະທັຍ. ເປັນໜ້າເສັຽດາຍ, ທີ່ຕ້ອງໃຊ້ເວລາຍາວນານຢາໂຄບຈຶ່ງເຂົ້າໃຈເຖິງຂອງທີ່ມີຄ່ານີ້. ຄຣິສະຕຽນຄວນສຳຣວດເບິ່ງການຖ່ອມໃຈຂອງຕົນເອງທີ່ວ່າ ພຣະເຈົ້າໄດ້ມີພາກສ່ວນໃນຊີວິດຂອງຕົນຫລືບໍ່.

## ບົດຮຽນໃນຊີວິດ

ການຖ່ອມຈິດຖ່ອມໃຈບໍ່ແມ່ນສິ່ງສັງຄົມເອົາມາປະກອບໃຊ້, ແຕ່ມັນເປັນສິ່ງຈຳເປັນຕໍ່ຄົນຂອງພຣະເຈົ້າ. ການທຳລາຍຄວາມຈອງຫອງ ແລະຮູ້ເຖິງພຣະເຈົ້າແລະຕົນເອງເປັນເຣື່ອງສຳຄັນໃນຊີວິດ. ຖ້າມີຄວາມຕ້ອງການສ້າງຄວາມພັນດີກັບພຣະອົງແລະຄົນອື່ນ. ໃນເມື່ອເຮົາຢາກຄືນດີກັບຄົນອື່ນແລ້ວການຖ່ອມຈິດຖ່ອມໃຈນີ້ເປັນສິ່ງຈຳເປັນຕ້ອງມີໃນຊີວິດຂອງເຮົາກ່ອນ. ເຮັດແນວໃດພວກເຮົາຈຶ່ງຈະມີການຖ່ອມຈິດຖ່ອມໃຈເກີດຂຶ້ນໃນຊີວິດໄດ້?

- ໃຫ້ກວດເບິ່ງຄວາມສັມພັນຂອງທ່ານກັບຄົນອື່ນ. ເຫັນວ່າຄວາມສັມພັນນັ້ນຜິດພາດ ຫລືອອກນອກທາງຫລືບໍ່? ແມ່ນຫຍັງເປັນສິ່ງທີ່ກໍ່ເຫດນັ້ນ?
- ໃຫ້ຄິດເຖິງວິທີທີ່ທ່ານຈະຖ່ອມຕົວຕໍ່ໜ້າຄົນອື່ນ. ການຖ່ອມຕົວນັ້ນຈະສາມາດປ່ຽນແປງຄວາມສັມພັນນັ້ນໄດ້ຫລືບໍ່? ແລະຈະມີອັນໃດເປັນການສ່ຽງ?
- ໃຫ້ຄຳນວນເບິ່ງພາບຕົວຈິງຂອງພຣະເຈົ້າແລະຕົວທ່ານວ່າທ່ານໃຫ້ແນະຕົວເອງສູງເກີນໄປ ແລະໃຫ້ຄະແນນພຣະເຈົ້າຕ່ຳເກີນໄປບໍ່?

ອັນຕະລາຍຈະເກີດຂຶ້ນໃນຊີວິດຂອງພວກເຮົາ ຖ້າພວກເຮົາມີຄວາມຈອງຫອງຖືຕົວເປັນໃຫຍ່. ແຕ່ການຖ່ອມຕົວນັ້ນຈະຊ່ອຍໃຫ້ເຮົາເອົາໄຊຊະໄດ້ ເພາະເປັນນ້ຳພຣະທັຍຂອງພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.